NSW GOVERNMENT

General permission to publish and disclose information

# ການອະນຸຍາດທົ່ວໄປໃນການເຜີຍແຜ່ແລະເປີດເຜີຍຂໍ້ມູນ

ພໍ່ແມ່/ຜູ້ດູແລ ທີ່ຮັກແພງ

ຂ້າພະເຈົ້າຂໍຄໍາອະນຸຍາດຈາກທ່ານເພື່ອໃຫ້ໂຮງຮຽນ/ກະຊວງສຶກສາເຜີຍແຜ່ ແລະ/ຫຼື ເປີດເຜີຍຂໍ້ມູນກ່ຽວກັບລູກຂອງທ່ານເພື່ອຈຸດປະສົງຂອງການແບ່ງປັນປະສົບການຂອງລາວກັບນັກຮຽນຄົນອື່ນໆ, ແຈ້ງໃຫ້ໂຮງຮຽນແລະຊຸມຊົນທົ່ວໄປກ່ຽວກັບກິດຈະກໍາຂອງໂຮງຮຽນແລະນັກຮຽນແລະບັນທຶກ ການມີສ່ວນຮ່ວມຂອງນັກຮຽນໃນໂຄງການທີ່ສໍາຄັນ ຫຼື ການບໍລິການຊຸມຊົນ.

ຂໍ້ມູນນີ້ອາດຈະລວມເອົາຊື່, ອາຍຸ, ຊັ້ນຮຽນ ແລະ ຂໍ້ມູນທີ່ເກັບກໍາເອົາຢູ່ໃນໂຮງຮຽນຂອງລູກທ່ານ ເຊັ່ນ: ຮູບຖ່າຍ ການບັນທຶກສຽງ ແລະພາບຂອງລູກທ່ານ ວຽກງານ ແລະ ການສະແດງຄວາມຄິດເຫັນຂອງລູກທ່ານ ເຊັ່ນໃນສື່ແບບໂຕ້ຕອບ.

ການສື່ສານທີ່ຂໍ້ມູນຂອງລູກທ່ານອາດຈະຖືກເຜີຍແຜ່ ຫຼືເປີດເຜີຍລວມມີ ແຕ່ບໍ່ຈໍາກັດພຽງແຕ່:

- ເວັບໄຊຕ໌ສາທາລະນະຂອງກະຊວງສຶກສາ ລວມທັງເວັບໄຊຕ໌ຂອງໂຮງຮຽນ ອິນຕຣາເນັດ ຂອງກະຊວງສຶກສາ (ສະເພາະພະນັກງານເທົ່ານັ້ນ), ບລອັກສ໌ ແລະ ວິກິສ໌
- ສິ່ງຕີພິມຂອງກະຊວງສຶກສາລວມທັງຈົດໝາຍຂ່າວຂອງໂຮງຮຽນ, ວາລະສານໂຮງຮຽນປະຈໍາປີ ແລະ ບົດລາຍງານຂອງໂຮງຮຽນ, ສື່ໂຄສະນາທີ່ພິມອອກເປັນສິ່ງພິມ ແລະ ທາງອີເລັກໂທຣນິກ ລວມທັງຢູ່ໃນເວັບໄຊຕ໌ຂອງກະຊວງ.
- ບັນຊີສື່ມວນຊົນສັງຄົມຂອງກະຊວງທີ່ເປັນທາງການ ແລະ ຂອງໂຮງຮຽນຢູ່ໃນເຄືອຂ່າຍເຊັ່ນ ຢູທູບ ເຟຊບຸກ ແລະ ທະວິເຕີຣ໌
- ໜັງສືພິມທ້ອງຖິ່ນ ແລະ ເມືອງຫຼວງ ແລະວາລະສານ ແລະ ສື່ອື່ນໆ.

ພໍ່ແມ່ຄວນຮູ້ວ່າເມື່ອມີການເຜີຍແຜ່ຂໍ້ມູນຢູ່ໃນເວັບໄຊຕ໌ສາທາລະນະແລະຊ່ອງທາງສື່ສັງຄົມ, ຂໍ້ມູນດັ່ງກ່າວສາມາດຄົ້ນພົບໄດ້ທາງອອນລາຍເປັນເວລາຫຼາຍປີ, ຖ້າບໍ່ໄດ້ເຜີຍແຜ່ຢ່າງຖາວອນ. ເຄື່ອງມືຊອກຫາອາດຈະ ຢູ່ບ່ອນເຊື່ອງ ຫຼື ເກັບຮັກສາສໍາເນົາຂອງຂໍ້ມູນທີ່ເຜີຍແຜ່ໄວ້. ຂໍ້ມູນທີ່ຖືກເຜີຍແຜ່ຍັງສາມາດເຊື່ອມຕໍ່ກັບບຸກຄົນທີສາມໄດ້.

ກະລຸນາຕື່ມແບບຟອມການອະນຸຍາດ ແລະ ສົ່ງກັບຄືນໄປໂຮງຮຽນພາຍໃນວັນທີຕໍ່ໄປນີ້:

Date for return of permission form

## ການຊ່ວຍເຫຼືອຂອງນາຍພາສາ

ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ ກະລຸນາຕິດຕໍ່ໂຮງຮຽນ.

ຖ້າທ່ານຕ້ອງການຄວາມຊ່ວຍເຫຼືອຈາກນາຍພາສາເພື່ອຕິດຕໍ່ໂຮງຮຽນ, ກະລຸນາໂທຫາ ເບີ 131 450 ບອກຜູ້ຮັບສາຍວ່າທ່ານຕ້ອງການພາສາໃດ ແລະ ຂໍໃຫ້ພວກເຂົາໂທຫາໂຮງຮຽນ. ຜູ້ຮັບສາຍຈະໄດ້ຫາເອົານາຍພາສາມາເວົ້າໃນສາຍເພື່ອຊ່ວຍທ່ານໃນການສົນທະນາ ຂອງທ່ານ. ທ່ານຈະບໍ່ຖືກເກັບຄ່າບໍລິການນີ້.

ດ້ວຍຄວາມຮັກແພງ

ຊື່ຂອງທ່ານຄູໃຫຍ່ (Name of principal)

ຊື່ຂອງໂຮງຮຽນ (Name of school)

## ການອະນຸຍາດຈາກພໍ່ແມ່/ຜູ້ດູແລໃນການເຜີຍແຜ່ຄວາມຍິນຍອມ
## Parent/carer permission to publish consent

ຂ້ອຍໄດ້ອ່ານການອະນຸຍາດໃຫ້ເຜີຍແຜ່ນີ້ ແລະ:

(ໝາຍເອົາປ່ອງໜຶ່ງທາງລຸ່ມເທົ່ານັ້ນ ແລະ ປະໃຫ້ອີກອັນໜຶ່ງຫວ່າງເປົ່າ)

☐ ຂ້ອຍອະນຸຍາດໃຫ້ໂຮງຮຽນ/ກະຊວງສຶກສາເຜີຍແຜ່ຂໍ້ມູນກ່ຽວກັບລູກຂອງຂ້ອຍ ຕາມທີ່ອະທິບາຍໄວ້ຂ້າງເທິງ, ລວມທັງການສື່ສານທີ່ສາທາລະນະສາມາດເຂົ້າເຖິງໄດ້.
I give permission to the school/Department of Education to publish information about my child as described above, including in publicly accessible communications.

☐ ຂ້ອຍບໍ່ອະນຸຍາດໃຫ້ໂຮງຮຽນ/ກະຊວງສຶກສາເຜີຍແຜ່ຂໍ້ມູນກ່ຽວກັບລູກຂອງຂ້ອຍຕາມທີ່ອະທິບາຍໄວ້ຂ້າງເທິງ, ລວມທັງໃນການສື່ສານທີ່ສາທາລະນະສາມາດເຂົ້າເຖິງໄດ້.
I do not give permission to the school/Department of Education to publish information about my child as described above, including in publicly accessible communications.

ການອະນຸຍາດທີ່ໄດ້ເຊັນນີ້ຍັງຄົງມີຜົນບັງຄັບໃຊ້ຈົນກວ່າຂ້ອຍຈະແນະນຳໃຫ້ໂຮງຮຽນຢຸດ.

ຊື່ຂອງເດັກ (ກະລຸນາຂຽນໂຕພິມ) ______________________________
Name of child

ຊື່ພໍ່ແມ່/ຜູ້ດູແລ (ກະລຸນາຂຽນໂຕພິມ) ______________________________
Name of parent/carer

ລາຍເຊັນຂອງພໍ່ແມ່/ຜູ້ດູແລ ______________________________
Signature of parent/carer

ວັນທີ ______________________________
Date